# ກາຣເມືອງ ການປົກຄອງໃໝ່

ກາຣປົກຄອງປະເທສລາວໃນປີ-໑໙໗໕-ນັ້ນ ໄດ້ປ່ຽນຊື່ປະເທສລາວໄປເປັນປະເທສສາທາຣະນະລັດປະຊາທິປະໄຕປະຊາຊົນລາວ ປົກຄອງດ້ວຍຣະບອບຄອມມຸນິສວຽດນາມປະຊາຊົນລາວໄດ້ຢູ່ໃຕ້ອຳນາດຂອງຕ່າງຊາຕຯ ໃນການປົກຄອງປະເທສລາວ ດ້ວຍຣະບອບປະຊາທິປະໄຕຢ່າງແທ້ຈິງນັ້ນ ປະຊາຊົນລາວທຸກຄົນຕ້ອງໄດ້ເຂົ້າປະກອບສ່ວນ ຖ້າບຸກຄົນໃດບໍ່ຍອມປະຕິບັດຕາມຄົນນັ້ນໃຫ້ຖືວ່າ ສິດທິຂອງບຸກຄົນຕາມຣະບອບປະຊາທິປະໄຕໃນທັມມະ ແຕ່ຢູ່ໃນຖານະ ເປັນພົລເມືອງດີຂອງຊາຕເພື່ອບໍ່ໃຫ້ໄຊ້ອຳນາດສ່ວນຕົວ-ບຸກຄົນຢູ່ທີ່ປະເທສລາວຖ້າຜູ້ໃດເປັນຄົນເຖົ້າຄົນແກ່ ຫຼືເປັນຄົນເສັຽອົງຄະຕ້ອງດ້ຽງດູແລະອຸປຖັມຄົນຜິການຢ່າງເປັນທັມຕາມສະພາບຂອງແຕ່ຣະຄົນນັ້ນ ອັນນີ້ຈຶ່ງເອີ້ນວ່າສະພາບການປະກອບສ່ວນໃນຣະບອບປະຊາທິປະໄຕຯ-ແຕ່ລາວຄອມມຸນິສມາປົກຄອງນັ້ນເຂົາໃຫ້ປະຊາຊົນລາວທຸກຊົນຊາຕຈຳເປັນໃຫ້ເຂົ້າປະກອບສ່ວນ ພອມທັງຄູບາອາຈານ ຕາມຜູ້ນຳລາວແດງຮຽກຮ້ອງໃຫ້ເຂົ້າປະກອບສ່ວນ ຖ້າບຸກຄົນໃດບໍ່ຍອມປະຕິບັດຕາມຄົນນັ້ນຫຼືຄູບາອົງນັ້ນ-ເຂົາຖືວ່າເປັນປະຕິການຕ້ານປະຕິວັດຂອງເຂົາ-ເຂົາຈະຫລັບສູນຊີວິດຂ້າເສັຽທັນທີ -ໃນການທີ່ເຂົ້າປະກອບສ່ວນນັ້ນກໍ່ໄດ້ແຕ່ຄວາມຮູ້ຄວາມສາມາດ ຂອງຄົນແຕ່ຣະຄົນຢູ່ທີ່ລາວພາກໄຕ້ ເຊັ່ນແຂວງຈຳປາສັກປາກເຊສີພັນດອນ ສາຣະວັນ ອັຕປື ວາປີຄຳທອງ ຖ້າຜູ້ໃດເປັນຄົນເຖົ້າຄົນແກ່ມັນກໍ່ໃຫ້ພາກັນໄປລ້ຽງໝູລ້ຽງເປັດລ້ຽງໄກ່ແລະປູກຜັກລວມໝູ່ເຮັດນາລວມໝູ່ຕາມສະພາບຂອງແຕ່ຣະຄົນ ອັນນີ້ຣະພວກລາວແດງ ຈຶ່ງເອີ້ນວ່າສະພາບການປະກອບສ່ວນຂອງເຂົາຯ ແຕ່ກ່ອນປະເທສລາວເຮົາມີທ້ອງຟ້າສີຄາມຜ່ອງອຳໄພໃສສະອາດແລ້ວ ຈົ່ນວ່າຄົນລາວໄດ້ເຫັນແຈ້ງແລະໄດ້ປົດປ່ອຍຕົນເອງ ອອກຈາກແອກໄມ້ຂອງຝຣັ່ງເສສ ທີ່ເອົາມາສຸບຄໍປະຊາຊົນລາວນັ້ນແຕ່ສຸດທ້າຍມາເປັນຫຍັງ ຈຶ່ງມາພາປະຊາຊົນລາວ ເຂົ້າໄປສູ່ແອກເຫຼັກອີກຈົ່ນວ່າປະຊາຊົນຢູ່ບໍ່ໄດ້ ຕ້ອງດັ້ງໃຫຼ ໜີອອກຈາກປະເທສ ຖ້າສົມມຸສວ່າມັນເກີດ ຂຶ້ນກັບພວກທ່ານເດ ພວກ

ທ່ານຈະຄຶດຄືແນວໃດແລ້ວທ່ານຄວນຈະຄຶດເບິ່ງວ່າ ສ່ວນຫົວໃຈຂອງຄົນລາວ ຂອງຄົນຂະເໝນ ຂອງຄົນວຽດນາມນັ້ນ ທີ່ພວກເຂົາເຈົ້າກໍ່ຍັງໄດ້ເວົ້າກັນຢູ່ເລີ ວ່າ ເປັນຫຍັງພວກເຮົາຈຶ່ງໄດ້ອອກໜີຈາກບ້ານເກີດຂອງຕົນ [ ອັນນີ້ຢາກຂໍຖາມພວກສະຫາຍທັງວ່າ ໃນຄັ້ງນຶ່ງນັ້ນຈື່ໄດ້ບໍ່ ການປະຊຸມໃນປີ-໑໙໕໖-ຫາ-໕໗-ນັ້ນພວກເຮົາໄດ້ປະກາດວ່າ ຖ້າຝຣັ່ງເສສຍອມແພ້ແລ້ວປະເທສລາວເຮົາຕ້ອງປົກຄອງ ດ້ວຍຕົນເອງແລະບໍ່ຍອມໃຫ້ຊາວຕ່າງຊາດເຂົ້າມາປົກຄອງລາວ-ລາວຕ້ອງປົກຄອງລາວ ດ້ວຍເຫດນີ້ ປະຊາຊົນລາວຈຶ່ງໄດ້ສນັບສນູນພວກເຮົາໃນຄາວນັ້ນ [-ອັນນີ້ແລ້ວພວກເຮົາຢາກຈະຖາມວ່າຖ້າຣະບອບໃໝ່ຂອງລາວຄອມມູນິສນີ້ ມັນດີແທ້ໆແລ້ວ ເປັນຫຍັງຄົນລາວຄົນຂະເໝນ ຄົນວຽດນາມ ຈຶ່ງພາກັນໜີອອກຈາກປະເທສ ບ່ອນຕົນທີ່ເຄີຍຢູ່ບ່ອນອູ່ທີ່ເຄີຍນອນ ແລະໄດ້ເຄີຍໝູນໝອນຮຽງຂ້າງພັລຍາແລະລູກອ່ອນ ເພາະວ່າບ້ານເກີດເມືອງນອນນີ້ ກໍ່ເປັນຂອງຄົນລາວເບີດທຸກຄົນ ມັນເປັນເພາະດ້ວຍເຫດໃດກັນແທ້ [ ພໍຕໍ່ມາໃນປີ-ພ ສ-໒໕໑໖-ນັ້ນ ຜູ້ນຳທັງສອງຝ່າຍກໍໄດ້ມາເຈຣະຈາຢຸດຕິສົງຄາມແລະກໍ່ມາເຊັນສັນຍາສົງບເສິກ ແຕ່ໃນສັນຍາ-໑໔-ມາຕຣາແລະອະນຸສັນຍາ-໒໘-ມາຕຣານັ້ນລວມເນື້ອໃນໃຈຄວາມຂອງສັນຍາອະນຸສັນຍານັ້ນ ເມື່ອມາວິເຄາະຢ່າງຈະແຈ້ງກັນແລ້ວ ຈະເຫັນໄດ້ວ່າໃນປະເທສລາວນີ້ຕ້ອງປົກຄອງ ດ້ວຍຣະບອບປະຊາທິປະໄຕແລະໃຫ້ມີພຣະມະຫາກະສັດເປັນປະມຸກຂອງຊາດ ສ່ວນປະຊາຊົນທັງຫລາຍ ກໍ່ໃຫ້ມີສິດທິໃນການປາກເວົ້າໃຫ້ມີສິດທິໃນການຂີດຂຽນ ໃຫ້ມີສິດທິໃນການຊຸມນຸມຊົນແລະໃນການສະແດງທາງດ້ານການເມືອງ ແຕ່ໃຫ້ປະຊາຊົນລາວໄດ້ມີສິດທິ ປາກເຊື່ອຖືສາສນາໃດກໍໄດ້[ ອັນນີ້ແລ້ວຄື ເນື້ອໃນໃຈຄວາມ ຂອງສັນຍາແລະອະນຸສັນຍາທີ່ລາວທັງສອງຝ່າຍໄດ້ເຊັນກັນໃນຄາວນັ້ນ ແລ້ວກໍ່ໄດ້ອອກໂຄງການການເມືອງ-໑໘-ຂໍ້ມາ ແຕ່ໃນໂຄງການ ການເມືອງ-໑໘-ຂໍ້ນັ້ນ ໄດ້ບອກວ່າ ມີຖານະຄືກັນກັບຣັຖທັມມະນູນ ທີ່ເຄີຍປົກຄອງປະເທສລາວມາແລ້ວ ໃນ-໑໒-ຂໍ້ຄັ້ງຕົ້ນນັ້ນເປັນນະໂຍບາຍພາຍໃນປະເທສ -໖-ຂໍ້ຂ້າງປາຍນັ້ນເປັນນະໂຍບາຍຕ່າງປະເທສ ແຕ່ຣະຂໍ້ແຕ່ຣະມາດ

ຕຣານັ້ນ ກໍໄດ້ບົ່ງບອກຈະແຈ້ງວ່າ ປະເທສລາວນີ້ ຕ້ອງປົກຄອງດ້ວຍຣະບອບປະຊາທິປະໄຕ ແລະໃຫ້ມີພຣະມະຫາກະສັດເປັນປະມຸກ ຂອງປະເທສ ດ້ວຍເຫດນີ້ ຣັຖບາລປະສົມທັງສອງຝ່າຍນັ້ນ ຈຶ່ງເປັນທີ່ຍອມຮັບ ຂອງປະຊາຊົນລາວທົ່ວປະເທສ ແຕ່ທາງຝ່າຍຊ້າຍ ມີຄວາມຄິສວ່າ ຖ້າມາປະສົມຕັ້ງຣັຖບາລຂຶ້ນນັ້ນ ກໍ່ເພື່ອເອົາເງື່ອນໄຂໃນທາງການເມືອງທໍ່ນັ້ນແຕ່ທີ່ຈິງແລ້ວ ພວກຝ່າຍຊ້າຍຄິສວ່າມຶງກັບກູຈະຢູ່ນຳກັນບໍ່ໄດ້ ເຫດທີ່ຢູ່ນຳກັນບໍ່ໄດ້ນັ້ນ ເຂົາວ່າຕ້ອງມີການຂັດແຍ້ງ- ໃນການຂັດແຍ້ງນັ້ນ ມັນມີສອງຢ່າງຫຼືສອງປະການ-ປະການອັນທີ-໑- ຄື ບໍ່ເປັນປໍຣະປັກ ສ່ວນຂໍ້ຂັດແຍ້ງໃດ ທີ່ມີການຂັດແຍ້ງຢູ່ໃນອຸໂດມການຂໍ້ຂັດແຍ້ງນັ້ນຈະປະນີປະນອມກັນບໍ່ໄດ້ ຕ້ອງໃຫ້ຕາຍອອກໄປຂ້າງນຶ່ງ-ປະການອັນທີ-໒-ໃນຂໍ້ຂັດແຍ້ງໃດແລະດ້ວຍວິທີໃດ-ແຕ່ອຸໂດມການບໍ່ກົງກັນ ອັນນັ້ນໃຫ້ປະນີປະນອມກັນໄດ້ ແຕ່ຝ່າຍວຽງຈັນຍຶດໝັ້ນຢູ່ໃນທາງສາສນາແລະທາງພຣະມະຫາກະສັດຫຼືດ້ວຍຣະບອບປະຊາທິປະໄຕ-ເພື່ອໃຫ້ປະຊາຊົນມີອິສຣະເສຣີໃນການທຳມາຫາກິນ ໃນການພັທນາຕົວເອງ ເປັນຂຸນສຶກສັກຕິນານາຍທຶນໄດ້ໃນຄວາມສາມາດ ຂອງໃຜຂອງມັນ-ສ່ວນອຸໂດມການຂອງຝ່າຍຊ້າຍຣະບອບຄອມມຸນິສ ກໍ່ທຳລາຍສາສນາທຳລາຍພຣະມະຫາກະສັດທຳລາຍຂຸນສຶກສັກຕິນານາຍທຶນ ແຕ່ອຸດົມການບໍ່ກົງກັນ ເມື່ອເວລາລາວຝ່າຍຄອມມຸນິສ ເຂົ້າມາບຸນ ເຂົາກໍ່ດຶງເອົາຫລັກສູດຂອງທ່ານມັກມາໃຊ້ທັນທີ-ສ່ວນໃນຫລັກສູດຂອງທ່ານມາກນັ້ນ ໄດ້ບອກວ່າຫີນສີລາແທ່ງໃຫຍ່ໜາ ໆ ນັ້ນ ເມື່ອມັນມີຮອຍແຕກແລ້ວ ໃຫ້ພາກັນນຳເອົາຫຼີ້ມຕອກລົງໃສ່ວັນຣະເລກຣະບ່ອຍທີ່ນັ້ນ ສ່ວນຫີນສີລາແທ່ງນັ້ນ ມັນຈະແຕກອອກຈາກກັນໄດ້ໃນທັນທີ ສ່ວນໃນບັນຫາສັງຄົມຂອງຊົນຊັ້ນນັ້ນກໍ່ຄືກັນແລະມັນກໍ່ຕ້ອງມີການແບ່ງແຍກກັນໄດ້ ຕາມຫລັກການຂອງຊົນຊັ້ນຂອງມັນ ເພາະສະນັ້ນ ມັນຈຶ່ງເປັນເງື່ອນໄຂໃຫ້ແກ່ຝ່າຍການເມືອງລາວຄອມມຸນິສ ໃນຄຳວ່າປະເທສລາວ ສັນຕິພາບ-ເອກຣາຊ-ເປັນກາງ-ປະຊາທິປະໄຕເອກພາບ-ວັທນາຖາວອນ-ໃນຄຳວ່າປະເທສນີ້ແມ່ນ ປະເທສແລະຂອບເຂດຫຼືແດນດິນ ອັນນີ້ຈຶ່ງເອີ້ນວ່າປະເທສ ຖ້າໃນລັກສະນະວ່າປະ

ເທສນັ້ນ ຕ້ອງປະກອບໃນຄຸນສົມບັດສາມປະການ ໃນຄຸນສົມບັດສາມປະການນັ້ນ ກໍ່ຄື ປະການອັນທີໜຶ່ງນັ້ນ-ເປັນປະເທສໃນລັກສະນະປວັດສາດ-ໃນລັກສະນະປວັດສາດໃນຄວາມ ເປັນມາຂອງລາວ-ປະການອັນທີສອງຄືເປັນປະເທສໃນລັກສະນະພູມີສາດ-ໃນລັກສະນະ ພູມີສາດນັ້ນ ໄດ້ແກ່ປະເທສລາວທາງທິດເໜືອຕິດພະມາກັບຈີນ ທາງທິດຕາເວັນອອກຕິດກັບ ວຽດນາມ ທາງທິດໄຕ້ຕິດກັບຂະເມນ ທາງທິດຕາເວັນຕົກຕິດກັບໄທຍ-ແຜ່ນດິນລາວມີພື້ນທີ່ ຢູ່ສອງແສນສາມໝື່ນຫົກພັນເຈັດຮ້ອຍຕຣາງກິໂລແມຕ ແລະ ປະການອັນທີສາມເປັນປະເທສ ໃນລັກສະນະອັນປະທັມ-ໃນລັກສະນະອັນປະທັມນັ້ນ ໄດ້ແກ່ຊີວິດອັນແບບແຜນ ຂອງປະຊາ ຊົນລາວ ຄືຜູ້ຍິງລາວຕ້ອງນຸ່ງສິ້ນໄໝໃສ່ແພບ່ຽງ ເກົ້າຜົມມ່ຽງ ແລະນຸ່ງສິ້ນຄຶງ ສ່ວນສິ້ນໄໝ ນັ້ນຕ້ອງໃຫ້ມີຫົວມີຕີນ ຄົນລາວຕ້ອງປັ້ນເຂົ້າໜຽວຈ້ຳປາແດກຈ້ຳກ້ອຍຈ້ຳລາບ ກິນກັນ ຈູ້ຈີ້ ຈຶ່ງເອີ້ນວ່າຄົນລາວ-ປະການອັນທີສີ່ນັ້ນ ຈະກ່າວເຖິງເລືອງ ສັນຕິພາບ ໃນສ່ວນສັນຕິພາບ ນັ້ນ ໝາຍເຖິງຄວາມສົງບສຸກທາງພາຍນອກ ໃນຄວາມສົງບສຸກທາງພາຍນອກນັ້ນໝາຍ ຄວາມວ່ານັບແຕ່ນີ້ຕໍ່ໄປ ສຽງປືນມັນຈະບໍ່ມີອີກແລ້ວ ຢູ່ໃນປະເທສລາວແລະໃນການປະ ຫັດປະຫານຂ້າຟັນຣັດແທງກັນ ມັນຈະບໍ່ມີອີກແລ້ວໃນຜືນແຜ່ນດິນລາວນັ້ນ ອັນນີ້ແມ່ນ ສັນຕິພາບພາຍນອກ-ສ່ວນສັນຕິພາບອັນທີສອງນັ້ນ ໝາຍເຖິງຄວາມສົງບສຸກທາງພາຍໃນ ທາງພາຍໃນນັ້ນ ໝາຍເຖິງໃນດ້ານຈິດໃຈ ເມື່ອທຸກຄົນບໍ່ຄິດຂ້າກັນ ບໍ່ຄິດເອົາປຽບເອົາຣັດ ກັນ ບໍ່ຄິດຫາຄວາມຜິດເຂົ້າໃສ່ກັນ ບໍ່ຄິດເອົາຄວາມເກົ່າມາເວົ້າກັນແລະບໍ່ຄິດບຽດບຽນຊຶ່ງກັນ ແລະກັນແລ້ວ ໃນຄວາມຮົ່ມເຢັນເປັນສຸກ ພາຍໃນດ້ານຈິດໃຈແລະຫ່າງກາຍ ມັນກໍ່ຈະເກີດ ມີຂຶ້ນໄດ້ລວມແລ້ວກໍ່ເອີ້ນວ່າສັນຕິພາບ-ໃນຄຳວ່າການເຂົ້າປະກອບສ່ວນນັ້ນໝາຍຄວາມ ວ່າຕ້ອງໃຫ້ພາກັນມາປຶກສາຫາລືໃນທາງທີ່ດີທີ່ຊອບ[ -ແລ້ວຕໍ່ມາ-ມາເວົ້າໃນເລື້ອງການສົມນາ ໃນການສົມນາອັນທີໜຶ່ງນັ້ນ-ຕ້ອງມາເວົ້າດ້ວຍຄວາມຮ່ງມີ ຂອງປະເທສລາວສ່ວນໃນປະ ເທສລາວນັ້ນມີຊັພຍາກອນທັມຊາຕ-ຄືມີພູຜາປ່າໄມ້ນ້ອຍໃຫຍ່

ແລະມີແມ່ນ້ຳນ້ອຍໃຫຍ່ ໄຫລເຂົ້າສູ່ແມ່ນ້ຳໂຂງມີທັງ -໑໘-ສາຍ ຫຼືເອີ້ນວ່າ -໑໘-ແຫ່ງ ອັນທີສອງນັ້ນ ວ່າດ້ວຍຄວາມຍາກຈົນ ຂອງປະຊາຊົນລາວ ເປັນຫຍັງຄົນລາວ ມັນຈຶ່ງຈົນ -ເຫດທີ່ຄົນລາວຍາກຈົນນັ້ນ ເພາະວ່າລະບອບຄອມມຸນິສ ໃຫ້ຈຳນົນຕໍ່ກົມຫຼືຕໍ່ຄວາມເວົ້າທີ່ບໍ່ເປັນທັມອັນແທ້ຈິງ ອັນນີ້ ບໍ່ຄວນຈະເຊື່ອ ແລະໃນການວ່າ ຄົນລາວມັນຈົນນັ້ນ ຫຼືຄົນປະເທສໃດກໍ່ຕາມ-ເພາະວ່າພວກເຮົາບໍ່ປະຕິບັດໃນຫລັກຄຳສອນ ຂອງພຣະພຸທເຈົ້າ ມັນກໍ່ບໍ່ແມ່ນໃນທາງສາສນາພຸດເຮົາ ສ່ວນໃນທາງສາສນາພຸດນັ້ນ ຢູ່ກັບການປະຕິບັດ-ປະຕິບັດອັນໃດແນ່ ເຮົາຕ້ອງປະຕິບັດຢູ່ໃນສິນຢູ່ທັມ-ສິນນັ້ນຄືຂໍ້ຫາມທັມມະຄືຂໍ້ປະຕິບັດ ແລະຕ້ອງປະຕິບັດຢູ່ໃນອຸໂດມການຂອງຊີວິດເພາະວ່າພຣະພຸທເຈົ້າ ເພິ່ນຕັດຫ້າມວ່າພວກຊາວພຸດນີ້ຢ່າຂ້າສັດ ຢ່າລັກຊັບ-ຢ່າເຫຼັ້ນເມັຍເຂົາ ຢ່າເຫຼັ້ນຜົວເຂົາ ຢ່າມົວເມົາກິນແຕ່ເຫລົ້າສຸລາຢ່າຝິ່ນແລະຢ່າກອບໂກຍເອົາຂອງຄົນອື່ນ ມາເປັນຂອງຕົນ ທີ່ບໍ່ໄດ້ອອກເຫື່ອເຫແຮງຂອງຕົນເອງນັ້ນ-ຄົນເຮົາຕ້ອງຮັກສາໄປຕາມສິນຫ້ານີ້ ຖ້າເຮົາປະຕິບັດໄປຕາມສິນຫ້ານີ້ ເຮົາກໍ່ມີສິນຢູ່ໃນໂຕຂອງເຮົາ ເມື່ອເຮົາມີສິນຢູ່ໃນໂຕຂອງເຮົາແລ້ວສິນນີ້ລະ ເພິ່ນປົກປັກຮັກສາ ໃຫ້ຄົນເຮົາມີຄວາມສຸກຄວາມຈະເຣີນໄດ້ຖ້າຄົນລາວເຮົາຖືສິນຫ້າໄດ້ ປະເທສລາວເຮົາມັນຈະບໍ່ເປັນຈັ່ງຊີ້ ແລະສັງຄົມມັນຈະບໍ່ວຸ້ນວາຍ ໃນປະເທສເຮົາເຖິງພຽງນີ້ ຄົນເຮົາຂໍໃຫ້ພາກັນຖືສິນຫ້ານັ້ນກໍ່ພໍແລ້ວ-ເພາະສິນຫ້ານັ້ນພຽງພໍແລ້ວ ສຳລັບເພິ່ນປົກປັກຮັກສາສິດທິຂອງເຮົາເອງ ຫຼືສິດທິຂອງຄົນອື່ນ ເພື່ອບໍ່ໃຫ້ກ້າວກາຍສິດທິຂອງກັນແລະກັນກໍ່ພໍແລ້ວ-ສ່ວນທັມມະນັ້ນ ມີທັງແປດໝື່ນສີ່ພັນພຣະທັມມະຂັນອັນນັ້ນຫຼາຍໄປແລ້ວ ຖ້າພວກເຮົາພາກັນມາປະຕິບັດ ໃນສິນຫ້ານີ້ໄດ້ມັນກໍ່ພໍແລ້ວ ແລະມັນຈະບໍ່ທຸກໃຈເຖິງພຽງນີ້-ເພາະວ່າສ່ວນໃນສິນຫ້ານັ້ນເພິ່ນໄດ້ສອນວ່າ ຄືຂໍ້ທີນຶ່ງນັ້ນ-ພຸດທະແລະສັມປະທາເຖິງຄວາມຂຍັນໝັ່ນພຽນ ຂໍ້ທີສອງນັ້ນ ອາຣັກຄະສັມປະທາ ເຖິງຄວາມເກບຮັກສາໄວ້ -ຂໍ້ທີສາມນັ້ນຄືອາຍະມິດຕັດຕາ ໃຫ້ຄົນເພື່ອນຄົນຝູງຄົນທີ່ດີທີ່ງາມ -ຂໍ້ທີສີ່ນັ້ນ ຄືສັມມາ ຊີວິຕາ

ໃຫ້ລ້ຽງຊີວິດໃນທາງດີທາງຊອບ-ຄົນເຮົາຄວນຮັກສາ ທັມມະໃນສີ່ຂໍ້ ນີ້ ມັນຈະບໍ່ຈົບ ແລະມັນກໍ່ຈະບໍ່ວຸ້ນວາຽ ໃນປະເທສເຮົາເຖິງພຽງນີ້ ເພາະຄຳສອນຂອງພຣະພຸທເຈົ້ານີ້ ມີ ຄຳສອນອັນດີ ໆ ມາສອນໃນແຕ່ລະຂໍ້ນັ້ນ ເປັນອະກາລິໂກ ຄືບໍ່ມີການລ້າສມັຍແລະບໍ່ມີ ການປຽນແປງ ຖ້າຄົນເຮົາຕ້ອງການປະຕິບັດຍາມໃດ ກໍ່ຕ້ອງໄດ້ຜົນຍາມນັ້ນ ເພາະບໍ່ມີການ ລ້າສມັຍແລະເພິ່ນຍັງສອນໄວ້ວ່າໃນທຸກແຍ່ທຸກມູມ ໃຫ້ດູແລກັນສມີພາບເຊັ່ນຜົວກັບເມັຽ ຈະປະຕິບັດຕໍ່ກັນຈັງໃດ ພໍ່ແມ່ກັບລູກຈະປະຕິບັດຕໍ່ກັນຈັງໃດ ຄູອາຈານກັບລູກສິດລູກຫາ ຂອງຕົນຈະປະຕິບັດຕໍ່ກັນຈັ່ງໃດ ເພື້ອນຕໍ່ເພື້ອນຈະປະຕິບັດຕໍ່ກັນຈັ່ງໃດ ນາຽກັບລູກນ້ອງຈະປະ ຕິບັດຕໍ່ກັນຈັ່ງໃດ-ອັນນີ້ພຣະພຸທເຈົ້າຂອງເຮົາແລະຄູອາຈານ ເພິ່ນໄດ້ມີ ຄຳສອນອັນດີ ໆມາສອນ ໃຫ້ຄົນເຮົາຟັງ ແຕ່ຄົນເຮົາບໍ່ພາກັນຟັງ ແລະກໍ່ບໍ່ປະຕິບັດຕາມຕ່າງຫາກ ປະເທສເຮົາມັນຈຶ່ງ ມີການວຸ້ນວາຽແລະໃນຄອບຄົວນັ້ນ ໆ ມັນເຖິງຍາກເຖິງຈົນ ສ່ວນໃນຄຳສອນຂອງພຣະພຸທເຈົ້າ ນັ້ນ ເພິ່ນໄດ້ສອນໄວ້ວ່າ-ນະໂມພຸດທັງທັມມະທັມມັງ-ມະໂນເສດຖາ-ມະໂນມະຍານະພາເຈ ພະເຖບະຕິ-ວາມະພະສິຕັງວາ ໆ ພະສີໂຫປະທັງ- ທ່ານທັງຫຼາຽພາວະທັງຫລາຽ ສິ່ງທັງຫລາຽ ໃຫ້ມີໃຈເປັນໃຫ່ຽ ໃຫ້ມີໃຈເປັນຫົວໜ້າ ໃຫ້ມີໃຈເປັນສະພາບ [-ແຕ່ລະບອບລາວຄອມ ມູນິສໄດ້ບອກວ່າໃນສະ ມາຊິກຂອງພັກນັ້ນ ຕ້ອງປະຕິບັດຕາມຫລັກການສີ່ຂໍ້ -ຄືຂໍ້ທີນຶ່ງນັ້ນ ເຂົາບອກວ່າຈະບໍ່ມີຣັດທິເອກຊົນ ແຕ່ເປັນຂອງກູບໄດ້ [-ອັນນີ້ທາງພຣະພຸທເຈົ້າເພິ່ນກໍ່ສອນ ໄວ້ຄືກັນວ່າ ບໍ່ໃຫ້ມີອຸປທານການເຂົ້າໄປຢຶດຖື ເພາະຕົວຢຶດຖືນັ້ນມັນເປັນຕົວທຸກ[-ຂໍ້ທີສອງ ລາວຄອມມູນິສບອກວ່າ ບໍ່ໃຫ້ມີຣັດທິຊົນຊາຕທ້ອງຖິ່ນ ບໍ່ໃຫ້ເວົ້າຄົນລາວ ຄົນຂເມນ ຄົນ ວຽດນາມ ຄົນໄທຍ ເພາະມັນຂັດກັບຫລັກສາກົນກັມຊຸນ [-ອັນນີ້ທາງພຣະພຸທເຈົ້າເພິ່ນ ກໍ່ສອນໄວ້ວ່າ ສັດທັງຫລາຽທັງປວງ ເກີດມາໃນໂລກນີ້ເປັນເພື້ອນເກີດແກ່ເຈັບຕາຽຢ່າບຽດ ບຽນຊຶ່ງກັນແລະກັນເລີຽ [- ຂໍ້ທີສາມລາວຄອມມູນິສບອກວ່າບໍ່ໃຫ້ຈ່າຽຟຸມເຟືອຽ[ອັນນີ້ ທາງພຣະພຸທເຈົ້າຂອງເຮົາເພິ່ນກໍ່ສອນຄືກັນວ່າໃຫ້ມີສັນຕິໃຫ້ມີຍຸດຕິທັມ

ໃຫ້ຈ່າຍຕາມມີຕາມໄດ້ (-ລາວຄອມມູນິສໄດ້ສອນອີກວ່າບໍ່ໃຫ້ອວດອົ່ງຄະນົງຕົວ (ໃນຂໍ້ທີສີ່ນີ້) ອັນນີ້ທາງພຣະພຸທເຈົ້າຂອງເຮົາເພິ່ນກໍ່ໄດ້ສອນຄືກັນວ່າໃຫ້ມີຄາຣະວະທັມ ໃຫ້ຮູ້ຈັກສູງໃຫ້ຮູ້ຈັກຕໍ່າຄືກັນ- ອັນນີ້ຄືພວກເຮົານຳເອົາມາທຽບທຽມ ໃນຂໍ້ນີ້ ໃຫ້ທ່ານທັງຫລາຍຈົ່ງນຳເອົາໄປພິຈາຣະນາແນ່ວ່າ ອັນໃດຜິດອັນໃດຖືກ ຄົນລາວເຮົາຄວນຈະໃຫ້ຮຽນຮູ້ແລະໃຫ້ຮູ້ໃນຄວາມຈິງວ່າ ລາວຄອມມູນິສນັ້ນ ມັນໃຊ້ ຄວາມຈິງຫຼືບໍ່ ຫຼືພວກມັນໃຊ້ແຕ່ຄວາມດອກລວງ ເຊັ່ນພວກມັນນຳເອົາພຣະເຈົ້າຟ້າງຸ່ມຂຶ້ນມາໃຫ້ປະຊາຊົນລາວຊາບ ໃຫ້ວັນນັ້ນມັນຖືກບໍ່ -ຖ້າວ່າມັນຖືກແທ້ອີຫຼີແລ້ວ ເປັນຫຍັງພວກລາວແດງຄອມມູນິສ ຈຶ່ງບໍ່ເຊີນເອົາຣາຊວົງທີ່ຢູ່ປະເທສຝຣັ່ງເສສມາຮ່ວມນຳ ເພາະວ່າເພິ່ນກໍ່ເປັນເຊື້ອສາຍ ຂອງພຣະເຈົ້າຟ້າງຸ່ມຄືກັນ (-ອັນນີ້ແລ້ວພວກເຮົາຈຶ່ງໄດ້ເວົ້າວ່າ ພວກລາວຄອມມູນິສ ດອກລວງປະຊາຊົນຂອງຕົນເອງ ເພາະວ່າຕົນເຄີຍປາບປາມສັກດີນາມາແລ້ວ ພຣະອົງກໍ່ອາດຈະເປັນສັກດີນາເພາະວ່າລູກຫລານຂອງເພິ່ນພວກລາວແດງຄອມມູນິສກໍ່ວ່າສັກດີນາແລະກໍໄດ້ນຳເອົາພຣະເຈົ້າຊີວິດຂອງລາວ ໄປປະຫານຊີວິດພ້ອມທັງເຊື້ອພຣະວົງຕ່າງ ໆ ແລະຂ້າຣາຊການຜູ້ນ້ອຍທີ່ບໍ່ຮູ້ເນື້ອໃນຕ່າງ ໆ ຫຍັງນັ້ນ ພວກມັນກໍໄດ້ເອົາໄປປະຫານຊີວິດເປີດແລ້ວ ອັນນີ້ແລ້ວຄົນລາວເຮົາ ຄວນຈະພາກັນມາພິຈາຣະນາແລ້ວໃຫ້ຄົ້ນຄົ້ວຢ່າງຈະແຈ້ງແລະເປັນທັມ

ຈາກສູນກາງ ສັນພູໝອກ

ທີ່ນະຄອນວຽງຈັນ

ໃນນາມ ຂບວນການລາວອິສຣະ

ຄັງວັນທ-໔໕-໕-໐໐

ປະເສລາວ ຈະ ຈະເຣີນກ້າວໜ້າໄປໄດ້ ກໍ່ຕໍ່ເມື່ອປະຊາຊົນເຂົ້າປະກອບສ່ວນນຳ
ສ່ວນປະຊາຊົນນັ້ນ ກໍ່ຕ້ອງໄດ້ຮັບຮູ້ໃນຄວາມເປັນມາ ຂອງຊາຕອີກດ້ວຍ